ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----====000====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 0054/ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 17 OCT 2019

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນຮ່ວມ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 195/ນຍ, ລົງວັນທີ 12 ມິຖຸນາ 2017;
- ອີງຕາມໜັງສືສະເໜີຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 0027/ສຄຄຊ, ລົງວັນທີ 25 ກັນຍາ 2019.

## ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບກອງທຶນຮ່ວມ ທີ່ສ້າງຕັ້ງ ແລະ ເຄື່ອນໄຫວ ຢູ່ ສປປ ລາວ ເພື່ອອຳນວຍຄວາມສະດວກໃຫ້ແກ່ການສ້າງຕັ້ງກອງທຶນຮ່ວມ ແນໃສ່ສົ່ງເສີມໃຫ້ການເຄື່ອນໄຫວຂອງກອງທຶນຮ່ວມ ມີປະສິດທິພາບ, ໝັ້ນຄົງ, ໂປ່ງໃສ, ຍຸຕິທຳ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ.

**ມາດຕາ 2 ກອງທຶນຮ່ວມ**

ກອງທຶນຮ່ວມ ແມ່ນ ທຶນທີ່ໄດ້ມາດ້ວຍການລະດົມທຶນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນຳເອົາທຶນທີ່ລະດົມໄດ້ໄປລົງທຶນໃສ່ຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 38

ຂອງຂໍ້ຕົກລົງສະບັບນີ້. ຊັບສິນຂອງກອງທຶນຮ່ວມໃດໜຶ່ງ ຖືວ່າເປັນຊັບສິນຂອງຜູ້ຖືໜ່ວຍລົງທຶນ ຂອງກອງທຶນຮ່ວມດັ່ງກ່າວ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສຄຄຊ** ໝາຍເຖິງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. **ໜ່ວຍລົງທຶນ** ໝາຍເຖິງ ຫົວໜ່ວຍວັດແທກກອງທຶນຮ່ວມ ທີ່ແບ່ງອອກເປັນສ່ວນ;
3. **ຜູ້ບໍລິຫານກອງທຶນຮ່ວມ** ໝາຍເຖິງ ນັກວິຊາຊີບທຸລະກິດຫຼັກຊັບປະເພດໜຶ່ງ ຜູ້ໄດ້ຮັບການແຕ່ງຕັ້ງຈາກບໍລິສັດບໍລິຫານຊັບສິນໃຫ້ຄຸ້ມຄອງ ແລະ ບໍລິຫານກອງທຶນຮ່ວມ ຊຶ່ງສາມາດຕັດສິນໃຈໃນການລົງທຶນໃນຫຼັກຊັບ ຫຼື ຊັບສິນອື່ນຕາມຂອບເຂດສິດທີ່ໄດ້ຮັບມອບໝາຍ;
4. **ການໃຫ້ບໍລິການດູແລຜົນປະໂຫຍດ** ໝາຍເຖິງ ການເປັນຕົວແທນເພື່ອປົກປ້ອງ ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ;
5. **ຜູ້ລົງທຶນປະເພດສະຖາບັນ** ໝາຍເຖິງ ທະນາຄານທຸລະກິດ, ບໍລິສັດຫຼັກຊັບ, ກອງທຶນຮ່ວມ, ບໍລິສັດປະກັນໄພ, ກອງທຶນປະກັນສັງຄົມ ແລະ ສະຖາບັນ ຫຼື ນິຕິບຸກຄົນອື່ນ ຕາມການກຳນົດຂອງ ສຄຄຊ;
6. **ຜູ້ລົງທຶນລາຍໃຫຍ່** ໝາຍເຖິງ ຜູ້ລົງທຶນທີ່ມີຄວາມຮູ້ຄວາມສາມາດດ້ານການເງິນ, ມີປະສົບການດ້ານການລົງທຶນ ແລະ ມີຊັບສິນສຸດທິ ຫຼື ມີລາຍຮັບປະຈຳປີ ຕາມການກຳນົດຂອງ ສຄຄຊ;
7. **ຜູ້ລົງທຶນລາຍຍ່ອຍ** ໝາຍເຖິງ ບຸກຄົນ ແລະ ນິຕິບຸກຄົນ ທີ່ບໍ່ແມ່ນຜູ້ລົງທຶນທີ່ເປັນມືອາຊີບ ທີ່ເຄື່ອນໄຫວຊື້-ຂາຍຫຼັກຊັບ;
8. **ທຶນຂອງກອງທຶນຮ່ວມ** ໝາຍເຖິງ ທຶນທັງໝົດ ທີ່ໄດ້ຈາກການອອກຈຳໜ່າຍໜ່ວຍລົງທຶນຂອງກອງທຶນຮ່ວມ ແລະ ຂຶ້ນທະບຽນໄວ້ກັບ ສຄຄຊ;
9. **ຜູ້ຖືໜ່ວຍລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ເປັນເຈົ້າຂອງກຳມະສິດໃນໜ່ວຍລົງທຶນຂອງກອງທຶນຮ່ວມ ຕາມຂໍ້ຕົກລົງສະບັບນີ້;
10. **ມູນຄ່າຊັບສິນສຸດທິຂອງກອງທຶນຮ່ວມ** (Net Asset Value) ໝາຍເຖິງ ມູນຄ່າຊັບສິນທັງໝົດຂອງກອງທຶນຮ່ວມ ລວມທັງຜົນຕອບແທນຂອງກອງທຶນຮ່ວມທີ່ຄາດວ່າຈະໄດ້ຮັບ ລົບ ໜີ້ສິນ ແລະ ຄ່າໃຊ້ຈ່າຍຂອງກອງທຶນຮ່ວມໃນໄລຍະເວລາດຽວກັນ;
11. **ບຸກຄົນທີ່ກ່ຽວພັນ** ໝາຍເຖິງ ຜົວ, ເມຍ, ລູກ, ພໍ່, ແມ່ ຂອງຜູ້ຖືໜ່ວຍລົງທຶນ;
12. **ນິຕິບຸກຄົນທີ່ກ່ຽວພັນ** ໝາຍເຖິງ ບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດ ທີ່ຖືໜ່ວຍລົງທຶນ.

**ມາດຕາ 4 ຫຼັກການ ການເຄື່ອນໄຫວຂອງກອງທຶນຮ່ວມ**

ກອງທຶນຮ່ວມ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ຊັບສິນຂອງກອງທຶນຮ່ວມໃດໜຶ່ງ ຖືວ່າເປັນຊັບສິນຂອງຜູ້ຖືໜ່ວຍລົງທຶນ;
2. ຂໍ້ມູນກ່ຽວກັບ ນະໂຍບາຍການລົງທຶນ, ຄວາມສ່ຽງ, ຜົນຕອບແທນ ແລະ ຂໍ້ມູນອື່ນ ຕ້ອງເປີດເຜີຍເພື່ອເປັນຂໍ້ມູນໃຫ້ຜູ້ລົງທຶນໃນການຕັດສິນໃຈລົງທຶນ;

3. ການປະເມີນມູນຄ່າຊັບສິນສຸດທິ ຂອງກອງທຶນຮ່ວມ, ການກຳນົດລາຄາຂາຍ ແລະ ລາຄາຊື້ຄືນ ຂອງໜ່ວຍລົງທຶນ ຕ້ອງມີວິທີການທີ່ເໝາະສົມ ພ້ອມທັງເປີດເຜີຍໃຫ້ແກ່ມວນຊົນ.

### ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກອງທຶນຮ່ວມ, ຜູ້ບໍລິຫານກອງທຶນຮ່ວມ, ບໍລິສັດບໍລິຫານຊັບສິນ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ຂອງບໍລິສັດບໍລິຫານຊັບສິນ ລວມທັງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວທຸລະກິດກ່ຽວກັບການສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ ຢູ່ ສປປ ລາວ.

## ໝວດທີ 2
## ການສ້າງຕັ້ງກອງທຶນຮ່ວມ

### ມາດຕາ 6 ປະເພດກອງທຶນຮ່ວມ

ກອງທຶນຮ່ວມ ມີ ສອງ ປະເພດ ດັ່ງນີ້:

1. ກອງທຶນຮ່ວມປິດ;
2. ກອງທຶນຮ່ວມເປີດ.

ກອງທຶນຮ່ວມປິດ ຕ້ອງຈົດທະບຽນຢູ່ຕະຫຼາດຫຼັກຊັບ ເພື່ອຊື້-ຂາຍໜ່ວຍລົງທຶນດັ່ງກ່າວ.

ກອງທຶນຮ່ວມເປີດ ສາມາດ ຈົດທະບຽນ ຫຼື ບໍ່ຈົດທະບຽນ ຢູ່ຕະຫຼາດຫຼັກຊັບ ເພື່ອຊື້-ຂາຍໜ່ວຍລົງທຶນກໍໄດ້. ກໍລະນີ ກອງທຶນຮ່ວມເປີດ ທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບ ຜູ້ສ້າງຕັ້ງກອງທຶນດັ່ງກ່າວຈະບໍ່ຮັບຊື້ຄືນໜ່ວຍລົງທຶນ.

### ມາດຕາ 7 ເງື່ອນໄຂການສ້າງຕັ້ງກອງທຶນຮ່ວມ

ບໍລິສັດບໍລິຫານຊັບສິນ ທີ່ມີຈຸດປະສົງສ້າງຕັ້ງກອງທຶນຮ່ວມ ນອກຈາກມີເງື່ອນໄຂທີ່ກຳນົດໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 31 ຍັງຕ້ອງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ເປັນບໍລິສັດທີ່ບໍ່ຢູ່ໃນພາວະລົ້ມລະລາຍ ຫຼື ໃກ້ຈະຢູ່ໃນພາວະລົ້ມລະລາຍ;
2. ມີທະນາຄານດູແລຊັບສິນ ທີ່ໄດ້ຮັບອະນຸຍາດຈາກ ສຄຄຊ ເພື່ອເກັບຮັກສາ ແລະ ຄຸ້ມຄອງຊັບສິນ ແລະ ເປັນຕົວແທນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;
3. ມີບໍລິສັດກວດສອບ ເພື່ອກວດສອບຖານະການເງິນຂອງກອງທຶນຮ່ວມ;
4. ເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

### ມາດຕາ 8 ເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ

ເອກະສານປະກອບການຂໍສ້າງຕັ້ງກອງທຶນຮ່ວມ ນອກຈາກທີ່ກຳນົດໃນກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 32 ຍັງຕ້ອງປະກອບເອກະສານເພີ່ມເຕີມ ດັ່ງນີ້:

1. ສຳເນົາໃບຢັ້ງຢືນນັກວິຊາຊີບທຸລະກິດຫຼັກຊັບ ປະເພດຜູ້ບໍລິຫານກອງທຶນຮ່ວມ ແລະ ຊີວະປະຫວັດຫຍໍ້ຂອງຜູ້ບໍລິຫານກອງທຶນຮ່ວມ;
2. ຮ່າງແຜນການລະອຽດ ກ່ຽວກັບການລະດົມທຶນ ແລະ ແຜນການລົງທຶນ;
3. ໜັງສືຊວນຊື້ຕາມການກຳນົດຂອງ ສຄຄຊ;
4. ຮ່າງສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ກັບ ທະນາຄານດູແລຊັບສິນ;
5. ຮ່າງສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ກັບ ບໍລິສັດກວດສອບ;
6. ຮ່າງສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ກັບ ຜູ້ຖືໜ່ວຍລົງທຶນ;
7. ຮ່າງແບບຟອມໃນການທົດສອບຄວາມສາມາດຮັບຄວາມສ່ຽງຂອງຜູ້ລົງທຶນ;
8. ເອກະສານອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 9 ໜັງສືຊວນຊື້ສຳລັບການຂາຍໜ່ວຍລົງທຶນ**

ໜັງສືຊວນຊື້ ສຳລັບການຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ນອກຈາກມີເນື້ອໃນຕາມທີ່ໄດ້ກຳນົດໃນກົດໝາຍຫຼັກຊັບ ມາດຕາ 34 ແລະ ຍັງຕ້ອງປະກອບດ້ວຍເນື້ອໃນເພີ່ມເຕີມ ດັ່ງນີ້:

1. ນະໂຍບາຍການລົງທຶນ ເປົ້າໝາຍການລົງທຶນ, ສັດສ່ວນຂອງປະເພດຊັບສິນທີ່ລົງທຶນ, ຄວາມສ່ຽງຂອງກອງທຶນຮ່ວມ, ເປົ້າໝາຍຜູ້ລົງທຶນ ແລະ ນະໂຍບາຍການຈ່າຍເງິນປັນຜົນ;
2. ນະໂຍບາຍກູ້ຢືມເງິນຂອງກອງທຶນຮ່ວມ (ຖ້າມີ);
3. ຈຳນວນເງິນທຶນຂອງໂຄງການ ແລະ ນະໂຍບາຍ ກ່ຽວກັບການເພີ່ມເງິນທຶນຂອງໂຄງການພາຍຫຼັງຂຶ້ນທະບຽນກອງທຶນຮ່ວມ;
4. ກຳນົດເວລາການ ຈຳໜ່າຍ, ຈັດສັນ ແລະ ຮັບຊື້ຄືນໜ່ວຍລົງທຶນ;
5. ມູນຄ່າຊັບສິນຂອງກອງທຶນຮ່ວມ;
6. ຂໍ້ຈຳກັດໃນການຈັດສັນໜ່ວຍລົງທຶນ (ຖ້າມີ);
7. ການຂໍມະຕິຂອງຜູ້ຖືໜ່ວຍລົງທຶນ;
8. ຂັ້ນຕອນການບໍລິຫານກອງທຶນຮ່ວມ;
9. ສະຖານທີ່, ຊ່ອງທາງ ຕິດຕໍ່ສອບຖາມການຮັບໜັງສືຊວນຊື້ ຫຼື ຮ້ອງຟ້ອງ;
10. ວິທີປ້ອງກັນທີ່ອາດກໍ່ໃຫ້ເກີດຂໍ້ຂັດແຍງທາງດ້ານຜົນປະໂຫຍດໃນກອງທຶນຮ່ວມ;
11. ການຮັບຮອງຄວາມຖືກຕ້ອງຂອງໜັງສືຊວນຊື້ ຊຶ່ງຕ້ອງມີລາຍເຊັນຂອງຜູ້ອຳນວຍການບໍລິສັດບໍລິຫານຊັບສິນ;
12. ຂໍ້ມູນອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 10 ສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ກັບ ທະນາຄານດູແລຊັບສິນ**

ສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ກັບ ທະນາຄານດູແລຊັບສິນ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ບໍລິສັດບໍລິຫານຊັບສິນ;
2. ລາຍລະອຽດຂອງໂຄງການຂອງກອງທຶນຮ່ວມ;
3. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງບໍລິສັດບໍລິຫານຊັບສິນ;
4. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງທະນາຄານດູແລຊັບສິນ;

5. ຂໍ້ຈຳກັດການຖືໜ່ວຍລົງທຶນ;
6. ວິທີການຊຳລະເງິນ ຫຼື ຊັບສິນອື່ນ;
7. ການອອກ ແລະ ສົ່ງມອບເອກະສານສະແດງສິດໃນໜ່ວຍລົງທຶນ;
8. ການຂຶ້ນທະບຽນໜ່ວຍລົງທຶນ, ການໂອນໜ່ວຍລົງທຶນ ແລະ ຂໍ້ຈຳກັດການໂອນໜ່ວຍລົງທຶນ;
9. ການປ່ຽນບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ;
10. ການປັບປຸງເພີ່ມເຕີມຂອງສັນຍາ;
11. ຫຼັກການ ແລະ ວິທີການ ໃນການຂໍມະຕິຂອງຜູ້ຖືໜ່ວຍລົງທຶນ ແລະ ຜົນສັກສິດຂອງມະຕິ;
12. ວິທີການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ;
13. ການທົດແທນຄວາມເສຍຫາຍໃຫ້ແກ່ກອງທຶນຮ່ວມ ຫຼື ຜູ້ຖືໜ່ວຍລົງທຶນ;
14. ການຍຸບເລີກກອງທຶນຮ່ວມ;
15. ການສະສາງ-ຊຳລະ ພາຍຫຼັງການຍຸບເລີກກອງທຶນຮ່ວມ;
16. ຄ່າບໍລິການ;
17. ເນື້ອໃນອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 11 ສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ກັບ ບໍລິສັດກວດສອບ**

ສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ກັບ ບໍລິສັດກວດສອບ ຕ້ອງມີເນື້ອໃນຕົ້ນຕໍ ດັ່ງນີ້.

1. ຊື່ບໍລິສັດບໍລິຫານຊັບສິນ;
2. ລາຍລະອຽດຂອງການກວດສອບ;
3. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງບໍລິສັດບໍລິຫານຊັບສິນ;
4. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ກວດສອບ;
5. ວິທີການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ບໍລິສັດບໍລິຫານຊັບສິນ ແລະ ຜູ້ກວດສອບ;
6. ການຍົກເລີກສັນຍາ;
7. ຄ່າບໍລິການ;
8. ເນື້ອໃນອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 12 ສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ກັບ ຜູ້ຖືໜ່ວຍລົງທຶນ**

ສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ກັບ ຜູ້ຖືໜ່ວຍລົງທຶນ ຕ້ອງມີເນື້ອໃນຕາມທີ່ໄດ້ກຳນົດໃນກົດໝາຍຫຼັກຊັບ ມາດຕາ 33 ແລະ ຍັງຕ້ອງປະກອບດ້ວຍເນື້ອໃນເພີ່ມເຕີມ ດັ່ງນີ້:

1. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງບໍລິສັດບໍລິຫານຊັບສິນ;
2. ຂອບເຂດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຖືໜ່ວຍລົງທຶນ;
3. ຂໍ້ຈຳກັດການຖືໜ່ວຍລົງທຶນ;
4. ຂໍ້ຈຳກັດໃນການຈ່າຍເງິນປັນຜົນ (ຖ້າມີ);
5. ວິທີການຊຳລະເງິນ ຫຼື ຊັບສິນອື່ນ;
6. ການຂຶ້ນທະບຽນໜ່ວຍລົງທຶນ, ການໂອນໜ່ວຍລົງທຶນ ແລະ ຂໍ້ຈຳກັດການໂອນໜ່ວຍລົງທຶນ;
7. ການປັບປຸງເນື້ອໃນຂອງສັນຍາ;

8. ຫຼັກການ ແລະ ວິທີການ ໃນການຂໍມະຕິຂອງຜູ້ຖືໜ່ວຍລົງທຶນ ແລະ ຜົນສັກສິດຂອງມະຕິ;
9. ການທົດແທນຄວາມເສຍຫາຍໃຫ້ແກ່ກອງທຶນຮ່ວມ ຫຼື ຜູ້ຖືໜ່ວຍລົງທຶນ;
10. ການຍຸບເລີກກອງທຶນຮ່ວມ;
11. ຄ່າບໍລິການ;
12. ເນື້ອໃນອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 13 ການພິຈາລະນາການຂໍສ້າງຕັ້ງກອງທຶນຮ່ວມ**

ສຄຄຊ ຕ້ອງພິຈາລະນາການຂໍສ້າງຕັ້ງກອງທຶນຮ່ວມ ພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ວັນ ໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາການຂໍສ້າງຕັ້ງກອງທຶນຮ່ວມ ຫາກເຫັນວ່າມີຄວາມຈຳເປັນ ສຄຄຊ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນພາກສ່ວນທີ່ກ່ຽວຂ້ອງມາໃຫ້ຂໍ້ມູນ.

**ມາດຕາ 14 ການປະກາດ ແລະ ການໂຄສະນາ ການອະນຸຍາດໃຫ້ສ້າງຕັ້ງກອງທຶນຮ່ວມ**

ບໍລິສັດບໍລິຫານຊັບສິນ ທີ່ໄດ້ຮັບອະນຸຍາດສ້າງຕັ້ງກອງທຶນຮ່ວມ ຕ້ອງປະກາດການອະນຸຍາດດັ່ງກ່າວຜ່ານພາຫະນະສື່ມວນຊົນ ຢ່າງໜ້ອຍ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບອະນຸຍາດໃຫ້ສ້າງຕັ້ງກອງທຶນຮ່ວມຈາກ ສຄຄຊ ເປັນຕົ້ນໄປ. ພ້ອມທັງໂຄສະນາການຈຳໜ່າຍໜ່ວຍລົງທຶນ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້.

**ມາດຕາ 15 ການຍົກເລີກການອະນຸຍາດການສ້າງຕັ້ງກອງທຶນຮ່ວມ**

ສຄຄຊ ມີສິດຍົກເລີກການອະນຸຍາດສ້າງຕັ້ງກອງທຶນຮ່ວມ ໃນກໍລະນີ ດັ່ງນີ້:

1. ຈຳໜ່າຍລົງທຶນ ບໍ່ສຳເລັດ ຕາມທີ່ໄດ້ກຳນົດໃນ ມາດຕາ 17 ຂອງຂໍ້ຕົກລົງສະບັບນີ້;
2. ຖືກຍົກເລີກການຈຳໜ່າຍໜ່ວຍລົງທຶນ ຕາມທີ່ໄດ້ກຳນົດໃນ ມາດຕາ 22 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ດຳເນີນການຈຳໜ່າຍໜ່ວຍລົງທຶນ ພາຍໃນກຳນົດເວລາ ໜຶ່ງປີ ນັບແຕ່ວັນໄດ້ຮັບອະນຸຍາດຈາກ ສຄຄຊ;
4. ກໍລະນີອື່ນ ຕາມການກຳນົດຂອງ ສຄຄຊ.

## ໝວດທີ 3
## ການຈຳໜ່າຍໜ່ວຍລົງທຶນ

**ມາດຕາ 16 ຮູບແບບການຈຳໜ່າຍໜ່ວຍລົງທຶນ**

ການຈຳໜ່າຍໜ່ວຍລົງທຶນຂອງກອງທຶນຮ່ວມ ມີ ສອງ ຮູບແບບ ຄື:

1. ກອງທຶນຮ່ວມສຳລັບຜູ້ລົງທຶນທົ່ວໄປ ແມ່ນກອງທຶນທີ່ຈຳໜ່າຍໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ, ຜູ້ລົງທຶນລາຍໃຫຍ່ ແລະ ຜູ້ລົງທຶນລາຍຍ່ອຍ ໃນຈຳນວນຜູ້ລົງທຶນ ຊາວລາຍ ຂຶ້ນໄປ.

2. ກອງທຶນຮ່ວມສຳລັບຜູ້ລົງທຶນລາຍໃຫຍ່ ແມ່ນກອງທຶນທີ່ຈຳໜ່າຍໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ ຫຼື ຜູ້ລົງທຶນລາຍໃຫຍ່ ໃນຈຳນວນຜູ້ລົງທຶນ ສິບລາຍ ຂຶ້ນໄປ.

ການຈຳໜ່າຍໜ່ວຍລົງທຶນ ສອງ ຮູບແບບດັ່ງກ່າວ ແມ່ນຜູ້ລົງທຶນ ໜຶ່ງລາຍ ລວມທັງ ບຸກຄົນ ຫຼື ນິຕິບຸກຄົນທີ່ກ່ຽວພັນ ບໍ່ສາມາດຖືຄອງໜ່ວຍລົງທຶນລວມກັນໄດ້ເກີນ ສາມສິບສ່ວນຮ້ອຍ ຂອງຈຳນວນໜ່ວຍລົງທຶນທີ່ຈຳໜ່າຍທັງໝົດ.

ການຈຳໜ່າຍໜ່ວຍລົງທຶນ ສາມາດຈຳໜ່າຍເປັນ ສະກຸນເງິນກີບ ຫຼື ສະກຸນເງິນຕາຕ່າງປະເທດ ຕາມການອະນຸຍາດຂອງ ສຄຄຊ.

ກອງທຶນຮ່ວມ ທີ່ຈະໄປຈຳໜ່າຍໜ່ວຍລົງທຶນໃຫ້ຜູ້ລົງທຶນຢູ່ຕ່າງປະເທດ ຕ້ອງໄດ້ຮັບອະນຸຍາດຈາກ ສຄຄຊ. ການໂອນເງິນຕາຕ່າງປະເທດ ທີ່ໄດ້ຈາກການຈຳໜ່າຍໜ່ວຍລົງທຶນຢູ່ຕ່າງປະເທດ ເຂົ້າມາ ສປປ ລາວ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ.

**ມາດຕາ 17 ກຳນົດເວລາໃນການຈຳໜ່າຍໜ່ວຍລົງທຶນ**

ບໍລິສັດບໍລິຫານຊັບສິນ ສາມາດຈຳໜ່າຍໜ່ວຍລົງທຶນຂອງກອງທຶນຮ່ວມໃນເວລາໃດກໍ່ໄດ້ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 18 ວັກໜຶ່ງ ຂອງຂໍ້ຕົກລົງສະບັບນີ້. ກໍລະນີ ບໍ່ຈຳໜ່າຍໜ່ວຍລົງທຶນພາຍໃນ ໜຶ່ງປີ ຖືວ່າການອະນຸຍາດສ້າງຕັ້ງກອງທຶນຮ່ວມ ໝົດອາຍຸ ແລະ ຕ້ອງໄດ້ດຳເນີນການຂໍອະນຸຍາດສ້າງຕັ້ງຄືນໃໝ່.

ສຳລັບກອງທຶນຮ່ວມປິດ ຕ້ອງດຳເນີນການຈຳໜ່າຍໜ່ວຍລົງທຶນໃຫ້ສຳເລັດ ຮ້ອຍສ່ວນຮ້ອຍ ຂອງຈຳນວນໜ່ວຍລົງທຶນທີ່ໄດ້ຮັບອະນຸຍາດໃຫ້ຈຳໜ່າຍ ພາຍໃນກຳນົດເວລາທີ່ໄດ້ຮັບອະນຸຍາດຈາກ ສຄຄຊ.

ກອງທຶນຮ່ວມເປີດ ຕ້ອງດຳເນີນການຈຳໜ່າຍໜ່ວຍລົງທຶນໃຫ້ສຳເລັດ ຢ່າງໜ້ອຍ ແປດສິບສ່ວນຮ້ອຍ ຂອງຈຳນວນໜ່ວຍລົງທຶນທີ່ໄດ້ຮັບອະນຸຍາດໃຫ້ຈຳໜ່າຍ ພາຍໃນກຳນົດເວລາທີ່ໄດ້ຮັບອະນຸຍາດຈາກ ສຄຄຊ.

ສຳລັບມູນຄ່າການຈຳໜ່າຍໜ່ວຍລົງທຶນຕໍ່າສຸດບໍ່ໃຫ້ຫຼຸດ ຫຼື ທຽບເທົ່າ ຫ້າຮ້ອຍລ້ານກີບ ຍົກເວັ້ນ ກໍລະນີຈຳໜ່າຍໜ່ວຍລົງທຶນເພີ່ມ.

**ມາດຕາ 18 ການເປີດຈອງຊື້ໜ່ວຍລົງທຶນ ແລະ ວາງເງິນມັດຈຳ**

ການເປີດຈອງຊື້ໜ່ວຍລົງທຶນ ຕ້ອງດຳເນີນຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້. ການຈອງຊື້ໜ່ວຍລົງທຶນຂອງກອງທຶນຮ່ວມ ຕ້ອງຈອງຊື້ຜ່ານຜູ້ຈຳໜ່າຍໜ່ວຍລົງທຶນ ຜ່ານຊ່ອງທາງ ໂທລະສັບ, ອີເມວ, ແຟັກ ຫຼື ຊ່ອງທາງອື່ນ ທີ່ສາມາດກວດສອບໄດ້. ການກຳນົດເວລາໃນການເປີດຈອງຊື້ໜ່ວຍລົງທຶນ ຕ້ອງບໍ່ຫຼຸດສອງວັນ ແລະ ສູງສຸດບໍ່ເກີນ ເກົ້າສິບວັນ.

ຜູ້ທີ່ຈອງຊື້ໜ່ວຍລົງທຶນ ຕ້ອງເປີດບັນຊີໜ່ວຍລົງທຶນຢູ່ບໍລິສັດບໍລິຫານຊັບສິນ ແລະ ເປີດບັນຊີເງິນກັບທະນາຄານທຸລະກິດ ທີ່ເຮັດໜ້າທີ່ເປັນທະນາຄານດູແລຊັບສິນຂອງກອງທຶນຮ່ວມດັ່ງກ່າວ. ເວລາສັ່ງຈອງຊື້ໜ່ວຍລົງທຶນ ຕ້ອງວາງເງິນມັດຈຳເທົ່າກັບມູນຄ່າຂອງຈຳນວນໜ່ວຍລົງທຶນທີ່ຈອງຊື້ ໃນແຕ່ລະຄັ້ງ ແລະ ຕ້ອງໂອນເງິນເຂົ້າບັນຊີຂອງກອງທຶນຮ່ວມ ທີ່ເປີດໄວ້ກັບທະນາຄານທຸລະກິດທີ່ເຮັດໜ້າທີ່ເປັນທະນາຄານດູແລຊັບສິນຂອງກອງທຶນຮ່ວມດັ່ງກ່າວ.

**ມາດຕາ 19 ການຈັດສັນໜ່ວຍລົງທຶນ**

ພາຍຫຼັງຜູ້ລົງທຶນ ສຳເລັດການຈອງຊື້ໜ່ວຍລົງທຶນ ແລະ ວາງເງິນມັດຈຳເຂົ້າໃນບັນຊີເງິນສະເພາະສຳລັບການເປີດຈອງຊື້ໜ່ວຍລົງທຶນ ບໍລິສັດບໍລິຫານຊັບສິນ ຕ້ອງດຳເນີນການຈັດສັນໜ່ວຍລົງທຶນໃຫ້ຜູ້ລົງທຶນທີ່ໄດ້ຈອງຊື້ໜ່ວຍລົງທຶນ ຕາມວິທີການຈັດສັນໜ່ວຍລົງທຶນ ທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້.

**ມາດຕາ 20 ການສົ່ງເງິນມັດຈຳຄືນ ໃຫ້ແກ່ຜູ້ຈອງຊື້ໜ່ວຍລົງທຶນ**

ກໍລະນີ ທີ່ບໍ່ໄດ້ຮັບການຈັດສັນໜ່ວຍລົງທຶນ ຕາມຈຳນວນໜ່ວຍລົງທຶນທີ່ຈອງຊື້ ຫຼື ກໍລະນີການຈຳໜ່າຍໜ່ວຍລົງທຶນບໍ່ສຳເລັດ ບໍລິສັດບໍລິຫານຊັບສິນ ຕ້ອງໂອນເງິນຄືນໃຫ້ແກ່ຜູ້ຈອງຊື້ໜ່ວຍລົງທຶນ ທີ່ບໍ່ໄດ້ຮັບການຈັດສັນໜ່ວຍລົງທຶນ, ການຈຳໜ່າຍໜ່ວຍລົງທຶນບໍ່ສຳເລັດ, ການໂຈະ ຫຼື ການຍົກເລີກການຈຳໜ່າຍໜ່ວຍລົງທຶນ ພາຍໃນກຳນົດເວລາ ສິບວັນລັດຖະການ.

**ມາດຕາ 21 ການອອກໃບຢັ້ງຢືນການຈັດສັນໜ່ວຍລົງທຶນ**

ບໍລິສັດບໍລິຫານຊັບສິນ ຕ້ອງອອກໃບຢັ້ງຢືນການຈັດສັນໜ່ວຍລົງທຶນໃຫ້ແກ່ຜູ້ຖືໜ່ວຍລົງທຶນ ໃຫ້ສຳເລັດພາຍໃນກຳນົດເວລາ ສິບຫ້າວັນລັດຖະການ ນັບແຕ່ວັນສຳເລັດການຈຳໜ່າຍໜ່ວຍລົງທຶນເປັນຕົ້ນໄປ.

**ມາດຕາ 22 ການໂຈະ ແລະ ການຍົກເລີກການຈຳໜ່າຍໜ່ວຍລົງທຶນ**

ການຈຳໜ່າຍໜ່ວຍລົງທຶນ ຈະຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສະໜອງຂໍ້ມູນບໍ່ຖືກຕ້ອງກັບຄວາມເປັນຈິງ;
2. ບໍ່ປະຕິບັດຕາມຂັ້ນຕອນຂອງການຈຳໜ່າຍໜ່ວຍລົງທຶນ;
3. ກໍລະນີອື່ນ ຕາມການກຳນົດຂອງ ສຄຄຊ.

ການຈຳໜ່າຍໜ່ວຍລົງທຶນ ຈະຖືກຍົກເລີກໃນກໍລະນີໃດໜຶ່ງ ດັ່ງນີ້:

1. ເຈດຕະນາສະໜອງຂໍ້ມູນບໍ່ຖືກຕ້ອງຕາມຄວາມເປັນຈິງ;
2. ບໍ່ສາມາດແກ້ໄຂຂໍ້ຄົງຄ້າງ ຕາມທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້;
3. ກໍລະນີອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 23 ການຈຳໜ່າຍໜ່ວຍລົງທຶນເພີ່ມ**

ກອງທຶນຮ່ວມປິດ ບໍ່ສາມາດອອກຈຳໜ່າຍໜ່ວຍລົງທຶນເພີ່ມໄດ້.

ສຳລັບກອງທຶນຮ່ວມເປີດ ສາມາດອອກຈຳໜ່າຍໜ່ວຍລົງທຶນເພີ່ມໄດ້. ບໍລິສັດບໍລິຫານຊັບສິນ ທີ່ມີຈຸດປະສົງອອກຈຳໜ່າຍໜ່ວຍລົງທຶນເພີ່ມ ຕ້ອງປະເອກະສານ ດັ່ງນີ້:

1. ຄຳຮ້ອງຕາມແບບພິມຂອງ ສຄຄຊ;
2. ຮ່າງແຜນການລະອຽດກ່ຽວກັບການລະດົມທຶນ ແລະ ແຜນການລົງທຶນ;
3. ໜັງສືຊວນຊື້ຕາມການກຳນົດຂອງ ສຄຄຊ;
4. ເອກະສານອື່ນ ຕາມການກຳນົດຂອງ ສຄຄຊ.

## ໝວດທີ 4
## ການຂຶ້ນທະບຽນກອງທຶນຮ່ວມ

**ມາດຕາ 24 ການຂຶ້ນທະບຽນກອງທຶນຮ່ວມ**

ພາຍຫຼັງສຳເລັດການອອກຈຳໜ່າຍໜ່ວຍລົງທຶນໃຫ້ແກ່ຜູ້ລົງທຶນ ບໍລິສັດບໍລິຫານຊັບສິນ ຕ້ອງລາຍງານ ແລະ ສະເໜີຂໍຂຶ້ນທະບຽນກອງທຶນຮ່ວມນຳ ສຄຄຊ ພາຍໃນກຳນົດເວລາ ຫ້າວັນລັດຖະການ ແລະ ສຄຄຊ ຕ້ອງພິຈາລະນາການຂຶ້ນທະບຽນ ພາຍໃນກຳນົດເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບການສະເໜີເປັນຕົ້ນໄປ.

ພາຍຫຼັງສຳເລັດການຂຶ້ນທະບຽນ ບໍລິສັດບໍລິຫານຊັບສິນ ຕ້ອງນຳເງິນທຶນທີ່ລະດົມໄດ້ໄປລົງທຶນໃນເປົ້າໝາຍຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ພາຍໃນກຳນົດເວລາ ເກົ້າສິບວັນ ພາຍຫຼັງໄດ້ຮັບໜັງສືຮັບຮອງການຂຶ້ນທະບຽນຈາກ ສຄຄຊ.

**ມາດຕາ 25 ເອກະສານປະກອບການຂໍຂຶ້ນທະບຽນ**

ເອກະສານປະກອບການຂໍຂຶ້ນທະບຽນ ມີດັ່ງນີ້:

1. ໃບສະເໜີຂໍຂຶ້ນທະບຽນກອງທຶນຮ່ວມ ຕາມແບບພິມຂອງ ສຄຄຊ;
2. ໃບຢັ້ງຢືນຜົນສຳເລັດການຈຳໜ່າຍໜ່ວຍລົງທຶນ ຈາກບໍລິສັດບໍລິຫານຊັບສິນ;
3. ໃບຢັ້ງຢືນຈຳນວນເງິນໃນບັນຊີຂອງກອງທຶນຮ່ວມ ທີ່ເປີດໄວ້ກັບທະນາຄານທຸລະກິດ ທີ່ເຮັດໜ້າທີ່ເປັນທະນາຄານດູແລຊັບສິນຂອງກອງທຶນຮ່ວມດັ່ງກ່າວ;
4. ລາຍຊື່, ຈຳນວນ ແລະ ອັດຕາສ່ວນ ຂອງຜູ້ຖືໜ່ວຍລົງທຶນ;
5. ເອກະສານອື່ນ ຕາມການກຳນົດຂອງ ສຄຄຊ.

**ມາດຕາ 26 ການພິຈາລະນາການຂໍຂຶ້ນທະບຽນກອງທຶນຮ່ວມ**

ສຄຄຊ ຕ້ອງພິຈາລະນາ ການຂໍຂຶ້ນທະບຽນກອງທຶນຮ່ວມ ພາຍໃນກຳນົດເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບ ຄົບຖ້ວນ ແລະ ຖືກຕ້ອງ. ໃນກໍລະນີປະຕິເສດ ກໍຕ້ອງແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

**ມາດຕາ 27 ການປ່ຽນແປງຂໍ້ມູນເພີ່ມເຕີມຂອງກອງທຶນຮ່ວມທີ່ໄດ້ຂຶ້ນທະບຽນແລ້ວ**

ບໍລິສັດບໍລິຫານຊັບສິນ ທີ່ມີຈຸດປະສົງປ່ຽນແປງເນື້ອໃນຂອງສັນຍາ ຫຼື ເນື້ອໃນທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຕ້ອງໄດ້ຮັບການເຫັນດີຈາກກອງປະຊຸມຜູ້ຖືໜ່ວຍລົງທຶນຂອງກອງທຶນຮ່ວມ ໃນຈຳນວນ ສອງສ່ວນສາມຂອງຜູ້ຖືໜ່ວຍລົງທຶນທັງໝົດ ພ້ອມທັງແຈ້ງການປ່ຽນແປງດັ່ງກ່າວໃຫ້ ສຄຄຊ ຊາບ.

## ໝວດທີ 5
## ການຂຶ້ນທະບຽນ, ຮັບຝາກ, ຈົດທະບຽນ, ຊື້-ຂາຍ, ໄລ່ລຽງ ແລະ ຫັກບັນຊີ ຂອງໜ່ວຍລົງທຶນ

### ມາດຕາ 28 ການຂຶ້ນທະບຽນ, ຮັບຝາກ, ຈົດທະບຽນ ແລະ ຊື້-ຂາຍ ໜ່ວຍລົງທຶນ

ໜ່ວຍລົງທຶນຂອງກອງທຶນຮ່ວມທີ່ບໍ່ຈົດທະບຽນໃນຕະຫຼາດຫຼັກຊັບ, ບໍລິສັດບໍລິຫານຊັບສິນ ສາມາດຂຶ້ນທະບຽນ ແລະ ຮັບຝາກ ໜ່ວຍລົງທຶນດັ່ງກ່າວ. ການໄຖ່ຖອນ ໜ່ວຍລົງທຶນຂອງກອງທຶນດັ່ງກ່າວ ໃຫ້ດຳເນີນການຢູ່ໃນບໍລິສັດບໍລິຫານຊັບສິນ.

ໜ່ວຍລົງທຶນຂອງກອງທຶນຮ່ວມທີ່ຈົດທະບຽນໃນຕະຫຼາດຫຼັກຊັບ, ບໍລິສັດບໍລິຫານຊັບສິນ ຕ້ອງນຳເອົາໜ່ວຍລົງທຶນດັ່ງກ່າວ ໄປຂຶ້ນທະບຽນ ແລະ ຝາກໄວ້ຢູ່ສູນຮັບຝາກຫຼັກຊັບ. ການຊື້-ຂາຍ ໜ່ວຍລົງທຶນ ໃຫ້ດຳເນີນການຢູ່ຕະຫຼາດຫຼັກຊັບ.

### ມາດຕາ 29 ການໄລ່ລຽງ ແລະ ຫັກບັນຊີ ຂອງໜ່ວຍລົງທຶນ

ການໄລ່ລຽງ ແລະ ຫັກບັນຊີ ຂອງໜ່ວຍລົງທຶນຂອງກອງທຶນຮ່ວມ ທີ່ບໍ່ຈົດທະບຽນໃນຕະຫຼາດຫຼັກຊັບ ສາມາດດຳເນີນຜ່ານບໍລິສັດບໍລິຫານຊັບສິນ. ສ່ວນໜ່ວຍລົງທຶນຂອງກອງທຶນຮ່ວມ ທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງດຳເນີນຜ່ານສູນຮັບຝາກຫຼັກຊັບ.

## ໝວດທີ 6
## ການຄຸ້ມຄອງ ແລະ ບໍລິຫານ ກອງທຶນຮ່ວມ

### ມາດຕາ 30 ການດູແລຜົນປະໂຫຍດ ແລະ ການເກັບຮັກສາຊັບສິນ ຂອງກອງທຶນຮ່ວມ

ການດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນຂອງກອງທຶນຮ່ວມ ແມ່ນໃຫ້ດຳເນີນການໂດຍທະນາຄານດູແລຊັບສິນ ທີ່ໄດ້ຮັບອະນຸຍາດຈາກ ສຄຄຊ.

ທະນາຄານດູແລຊັບສິນມີ ສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການຮັບຮອງການເຄື່ອນໄຫວທະນາຄານດູແລຊັບສິນ. ນອກຈາກນີ້ ຍັງມີ ສິດ ແລະ ໜ້າທີ່ ເພີ່ມເຕີມ ດັ່ງນີ້:

1. ຄຸ້ມຄອງບັນຊີເງິນ ແລະ ບັນຊີໜ່ວຍລົງທຶນ;
2. ເກັບຮັກສາຊັບສິນຂອງກອງທຶນຮ່ວມ;
3. ຈ່າຍເງິນປັນຜົນ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ຕິດພັນກັບການບໍລິຫານກອງທຶນຮ່ວມ;
4. ຕິດຕາມຜົນປະໂຫຍດຈາກການລົງທຶນແທນຜູ້ຖືໜ່ວຍລົງທຶນ;
5. ຕິດຕາມ ແລະ ກວດກາ ການບໍລິຫານກອງທຶນຮ່ວມ ຂອງບໍລິສັດບໍລິຫານຊັບສິນ ແລະ ຜູ້ບໍລິຫານກອງທຶນຮ່ວມ.

### ມາດຕາ 31 ການບັນຊີ ແລະ ກວດສອບ

ແຕ່ລະກອງທຶນຮ່ວມ ຕ້ອງປະຕິບັດຫຼັກການ ແລະ ມາດຕະຖານການບັນຊີ ພ້ອມທັງສ້າງເອກະສານລາຍງານການເງິນ ໃຫ້ສອດຄ່ອງກັບ ກົດໝາຍວ່າດ້ວຍ ການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ.

ເອກະສານລາຍງານການເງິນຂອງກອງທຶນຮ່ວມ ຕ້ອງໄດ້ຮັບການທົບທວນ ແລະ ກວດສອບຈາກບໍລິສັດກວດສອບ ທີ່ໄດ້ຮັບການຮັບຮອງຈາກ ສຄຄຊ.

### ມາດຕາ 32 ໂຄງປະກອບການບໍລິຫານຂອງກອງທຶນຮ່ວມ

ໂຄງປະກອບການບໍລິຫານຂອງກອງທຶນຮ່ວມ ປະກອບມີ: ກອງປະຊຸມຜູ້ຖືໜ່ວຍລົງທຶນ, ຄະນະກຳມະການບໍລິຫານກອງທຶນຮ່ວມ, ຜູ້ບໍລິຫານກອງທຶນຮ່ວມ ແລະ ພະນັກງານທີ່ຖືກແຕ່ງຕັ້ງໃນການດຳເນີນງານຂອງກອງທຶນຮ່ວມ.

### ມາດຕາ 33 ກອງປະຊຸມຜູ້ຖືໜ່ວຍລົງທຶນ

ກອງປະຊຸມຜູ້ຖືໜ່ວຍລົງທຶນ ປະກອບມີ ກອງປະຊຸມ ສາມັນ ແລະ ວິສາມັນ ສາມາດຈັດຂຶ້ນໃນຮູບແບບເຊິ່ງໜ້າ, ຜ່ານຊ່ອງທາງເອເລັກໂຕຣນິກ ຫຼື ໜັງສືວຽນ.

ກອງປະຊຸມສາມັນຂອງຜູ້ຖືໜ່ວຍລົງທຶນ ຕ້ອງເປີດຂຶ້ນພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສຳເລັດການກວດສອບຈາກບໍລິສັດກວດສອບພາຍນອກເປັນຕົ້ນໄປ. ກອງປະຊຸມວິສາມັນຂອງຜູ້ຖືໜ່ວຍລົງທຶນສາມາດເປີດຂຶ້ນເວລາໃດກໍ່ໄດ້ ຖ້າວ່າມີຄວາມຈຳເປັນ.

### ມາດຕາ 34 ຄະນະກຳມະການບໍລິຫານກອງທຶນຮ່ວມ

ຄະນະກຳມະການບໍລິຫານກອງທຶນຮ່ວມ ຕ້ອງປະກອບມາຈາກຂະແໜງການທີ່ກ່ຽວຂ້ອງຂອງ ບໍລິສັດບໍລິຫານຊັບສິນ ໂດຍໄດ້ຮັບການແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍ ໂດຍຜູ້ອຳນວຍການຂອງ ບໍລິສັດບໍລິຫານຊັບສິນ ຕາມການເຫັນດີຂອງຜູ້ຖືໜ່ວຍລົງທຶນໃນຈຳນວນສອງສ່ວນສາມ ຂອງຜູ້ຖືໜ່ວຍລົງທຶນທັງໝົດ ແລະ ຕ້ອງແຈ້ງຕໍ່ ສຄຄຊ ຊາບ.

ຄະນະກຳມະການບໍລິຫານກອງທຶນຮ່ວມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ເປົ້າໝາຍ ແລະ ອັດຕາສ່ວນ ການລົງທຶນ, ຄວາມສ່ຽງທີ່ກ່ຽວຂ້ອງ, ເປົ້າໝາຍຜູ້ລົງທຶນ, ອາຍຸ ແລະ ນະໂຍບາຍການຈ່າຍເງິນປັນຜົນ ຂອງກອງທຶນຮ່ວມ;
2. ຄົ້ນຄວ້າ ກ່ຽວກັບໂຄງການຂອງກອງທຶນຮ່ວມ, ແຜນການລະອຽດກ່ຽວກັບການລະດົມທຶນ, ແຜນການລົງທຶນ ແລະ ໜັງສືຊວນຊື້ຂອງກອງທຶນຮ່ວມ;
3. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການກຳນົດຂອງ ສຄຄຊ.

### ມາດຕາ 35 ຜູ້ບໍລິຫານກອງທຶນຮ່ວມ

ຜູ້ບໍລິຫານກອງທຶນຮ່ວມ ຖືກແຕ່ງຕັ້ງ, ປົດຕຳແໜ່ງ ຫຼື ຍົກຍ້າຍ ໂດຍຜູ້ອຳນວຍການຂອງ ບໍລິສັດບໍລິຫານຊັບສິນ ຕາມການເຫັນດີຂອງຜູ້ຖືໜ່ວຍລົງທຶນ ໃນຈຳນວນສອງສ່ວນສາມ ຂອງຜູ້ຖືໜ່ວຍລົງທຶນທັງໝົດ ແລະ ຕ້ອງແຈ້ງຕໍ່ ສຄຄຊ ຊາບ.

ສຳລັບ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຜູ້ບໍລິຫານກອງທຶນຮ່ວມມີ ດັ່ງນີ້:

1. ບໍລິຫານກອງທຶນຮ່ວມ ຕາມທີ່ກຳນົດໄວ້ໃນໜັງສືຊວນຊື້;
2. ບໍລິຫານກອງທຶນຮ່ວມ ຕາມທີ່ໄດ້ກຳນົດໄວ້ໃນສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ແລະ ຜູ້ລົງທຶນ;
3. ປະຕິບັດ ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບອື່ນ ຕາມການຕົກລົງເຫັນດີຂອງ ຜູ້ຖືໜ່ວຍລົງທຶນ.

**ມາດຕາ 36 ພະນັກງານທີ່ຖືກແຕ່ງຕັ້ງໃນການດຳເນີນງານຂອງກອງທຶນຮ່ວມ**

ພະນັກງານທີ່ຖືກແຕ່ງຕັ້ງໃນການດຳເນີນງານຂອງກອງທຶນຮ່ວມ ຕ້ອງມີຄວາມຮູ້ ແລະ ປະສົບການທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວ. ໃນກໍລະນີມີການແຕ່ງຕັ້ງ ຫຼື ຍົກຍ້າຍບຸກຄົນດັ່ງກ່າວ ຕ້ອງແຈ້ງຕໍ່ ສຄຄຊ ຊາບ.

**ມາດຕາ 37 ການປ້ອງກັນຂໍ້ຂັດແຍ່ງທາງຜົນປະໂຫຍດໃນກອງທຶນຮ່ວມ**

ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ຕ້ອງມີກົນໄກໃນການຕິດຕາມກວດກາຂໍ້ຂັດແຍ່ງທາງຜົນປະໂຫຍດທີ່ອາດເກີດຂຶ້ນກັບກອງທຶນຮ່ວມ.

## ໝວດທີ 7
## ການລົງທຶນຂອງກອງທຶນຮ່ວມ

**ມາດຕາ 38 ເປົ້າໝາຍການລົງທຶນຂອງກອງທຶນຮ່ວມ**

ກອງທຶນຮ່ວມ ສາມາດລົງທຶນໃສ່ເປົ້າໝາຍໃດໜຶ່ງ ຫຼື ທັງໝົດ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ ມາດຕາ 29.

ສຳລັບ ອັດຕາສ່ວນການລົງທຶນຂອງກອງທຶນຮ່ວມໃນແຕ່ລະເປົ້າໝາຍການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງ ຂອງມາດຕານີ້ ຕ້ອງປະຕິບັດຕາມທີ່ ສຄຄຊ ກຳນົດໃນແຕ່ລະໄລຍະ.

**ມາດຕາ 39 ການຄິດໄລ່ມູນຄ່າຊັບສິນສຸດທິ**

ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ຕ້ອງປະສານສົມທົບກັນໃນການດຳເນີນການຄິດໄລ່ມູນຄ່າຊັບສິນສຸດທິ ແລະ ມູນຄ່າຕໍ່ໜ່ວຍ ຂອງກອງທຶນຮ່ວມ ແຕ່ລະວັນທີ່ມີການຊື້-ຂາຍຫຼັກຊັບ ພາຍຫຼັງປິດການຊື້-ຂາຍຫຼັກຊັບ ແລະ ແຈ້ງຜົນການຄິດໄລ່ໃຫ້ຜູ້ຖືໜ່ວຍລົງທຶນ ພາຍໃນວັນດຽວກັນ ຜ່ານຊ່ອງທາງອີເມວ ຫຼື ຊ່ອງທາງອື່ນທີ່ຜູ້ຖືໜ່ວຍລົງທຶນສາມາດເຂົ້າເຖິງ.

**ມາດຕາ 40 ການຮັກສາຄວາມລັບໃນການລົງທຶນຂອງກອງທຶນຮ່ວມ**

ບໍລິສັດບໍລິຫານຊັບສິນ, ຄະນະກຳມະການບໍລິຫານກອງທຶນຮ່ວມ, ຜູ້ບໍລິຫານກອງທຶນຮ່ວມ ແລະ ພະນັກງານທີ່ກ່ຽວຂ້ອງ ຕ້ອງຮັກສາຄວາມລັບໃນການລົງທຶນຂອງກອງທຶນຮ່ວມແຕ່ລະກອງທຶນ.

## ໝວດທີ 8
## ການຄວບ, ລວມ, ຍຸບເລີກ ແລະ ການສະສາງ-ຊຳລະ ກອງທຶນຮ່ວມ

**ມາດຕາ 41 ການຄວບ ແລະ ລວມ ກອງທຶນຮ່ວມ**

ການຄວບກອງທຶນຮ່ວມ ແມ່ນການຄວບແຕ່ ສອງກອງທຶນຮ່ວມຂຶ້ນໄປ ເພື່ອເຂົ້າເປັນກອງທຶນຮ່ວມດຽວ ໂດຍສ້າງຕັ້ງກອງທຶນຮ່ວມໃໝ່ ແລະ ຍຸບເລີກກອງທຶນຮ່ວມເດີມ.

ການລວມກອງທຶນຮ່ວມ ແມ່ນການລວມແຕ່ ສອງກອງທຶນຮ່ວມ ເຂົ້າເປັນກອງທຶນຮ່ວມດຽວ ແລະ ຍຸບເລີກກອງທຶນຮ່ວມທີ່ມາລວມເຂົ້າກັບກອງທຶນຮ່ວມອື່ນ.

**ມາດຕາ 42 ເງື່ອນໄຂ ແລະ ຂັ້ນຕອນຂອງການ ຄວບ ແລະ ລວມ ກອງທຶນຮ່ວມ**

ເງື່ອນໄຂຂອງການຄວບ ແລະ ລວມ ກອງທຶນຮ່ວມ ມີ ດັ່ງນີ້:

1. ເປັນກອງທຶນຮ່ວມ ທີ່ຢູ່ພາຍໃຕ້ການບໍລິຫານຂອງບໍລິສັດບໍລິຫານຊັບສິນດຽວກັນ;
2. ມີມະຕິກອງປະຊຸມຜູ້ຖືໜ່ວຍລົງທຶນ ທີ່ເຫັນດີຫຼາຍກວ່າ ເຄິ່ງໜຶ່ງ ຂອງຈຳນວນໜ່ວຍລົງທຶນທີ່ໄດ້ຈຳໜ່າຍແລ້ວ;
3. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຄຄຊ.

ສຳລັບຂັ້ນຕອນການ ຄວບ ແລະ ລວມ ກອງທຶນຮ່ວມ ແມ່ນໃຫ້ປະຕິບັດຕາມການກຳນົດຂອງ ສຄຄຊ ເປັນແຕ່ລະໄລຍະ.

**ມາດຕາ 43 ການຍຸບເລີກກອງທຶນຮ່ວມ**

ການຍຸບເລີກກອງທຶນຮ່ວມທີ່ບໍ່ໄດ້ຈົດທະບຽນຢູ່ຕະຫຼາດຫຼັກຊັບ ຈະຖືກຍຸບເລີກໃນກໍລະນີ ດັ່ງນີ້:

1. ຈຳນວນ ຜູ້ລົງທຶນປະເພດສະຖາບັນ, ຜູ້ລົງທຶນລາຍໃຫຍ່ ແລະ ຜູ້ລົງທຶນລາຍຍ່ອຍ ຕ່ຳກວ່າ ຊາວລາຍ;
2. ຈຳນວນ ຜູ້ລົງທຶນປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ຕ່ຳກວ່າ ສິບລາຍ;
3. ມີການຂາຍຄືນໜ່ວຍລົງທຶນສຸດທິຫຼາຍກວ່າ ສອງສ່ວນສາມ ຂອງຈຳນວນໜ່ວຍລົງທຶນທີ່ຈຳໜ່າຍແລ້ວໃນວັນໃດໜຶ່ງ ຫຼື ໃນຊ່ວງໄລຍະເວລາ ຫ້າວັນ ທີ່ມີການຊື້-ຂາຍໜ່ວຍລົງທຶນຕິດຕໍ່ກັນ;
4. ຍຸບເລີກຕາມມະຕິກອງປະຊຸມຜູ້ຖືໜ່ວຍລົງທຶນ.

ບໍລິສັດບໍລິຫານຊັບສິນ ຕ້ອງຢຸດຮັບຄຳສັ່ງຊື້-ຂາຍໜ່ວຍລົງທຶນ ຕາມກໍລະນີທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຫາ 4 ຂອງມາດຕານີ້ ແລະ ຕ້ອງແຈ້ງ ຜູ້ຖືໜ່ວຍລົງທຶນ ທີ່ມີລາຍຊື່ຢູ່ໃນທະບຽນຜູ້ຖືໜ່ວຍລົງທຶນ, ທະນາຄານດູແລຊັບສິນ ແລະ ສຄຄຊ ຢ່າງເປັນລາຍລັກອັກສອນ.

ການຍຸບເລີກກອງທຶນຮ່ວມທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບ ຈະຖືກຍຸບເລີກກໍລະນີ ດັ່ງນີ້:

1. ຈຳນວນຜູ້ລົງທຶນປະເພດສະຖາບັນ, ຜູ້ລົງທຶນລາຍໃຫຍ່ ແລະ ຜູ້ລົງທຶນລາຍຍ່ອຍ ຕ່ຳກວ່າ ຊາວລາຍ;
2. ຈຳນວນຜູ້ລົງທຶນປະເພດສະຖາບັນ ແລະ ຜູ້ລົງທຶນລາຍໃຫຍ່ ຕ່ຳກວ່າ ສິບລາຍ;
3. ຍຸບເລີກຕາມມະຕິກອງປະຊຸມຜູ້ຖືໜ່ວຍລົງທຶນ.

**ມາດຕາ 44 ການສະສາງ-ຊຳລະພາຍຫຼັງການຍຸບເລີກກອງທຶນຮ່ວມ**

ພາຍຫຼັງການຍຸບເລີກກອງທຶນຮ່ວມ ບໍລິສັດບໍລິຫານຊັບສິນ ຕ້ອງດຳເນີນການ ດັ່ງນີ້:

1. ແຕ່ງຕັ້ງນິຕິບຸກຄົນໃດໜຶ່ງ ຕາມການເຫັນດີຂອງ ສຄຄຊ ເພື່ອເປັນຜູ້ສະສາງ-ຊຳລະແທນຕົນ;
2. ສົ່ງມອບບັນຊີ, ເອກະສານ ແລະ ຫຼັກຖານຕ່າງໆຂອງກອງທຶນຮ່ວມ ພ້ອມທັງແຈ້ງທະນາຄານດູແລຊັບສິນ ສົ່ງມອບບັນຊີ, ເອກະສານ ແລະ ຫຼັກຖານຕ່າງໆຂອງກອງທຶນຮ່ວມ ໃຫ້ແກ່ຜູ້ສະສາງ-ຊຳລະແທນຕົນ ພາຍໃນກຳນົດເວລາ ສິບວັນ ນັບແຕ່ວັນທີ່ຍຸບເລີກກອງທຶນຮ່ວມເປັນຕົ້ນໄປ;
3. ສົ່ງມອບເອກະສານລາຍງານການເງິນຂອງກອງທຶນຮ່ວມ ທີ່ຜ່ານການກວດສອບຈາກພາຍນອກ ໃຫ້ຜູ້ຊຳລະສະສາງແທນຕົນ ພາຍໃນກຳນົດເວລາ ສິບຫ້າວັນ ນັບແຕ່ວັນທີ່ຍຸບເລີກກອງທຶນຮ່ວມເປັນຕົ້ນໄປ.

ພາຍຫຼັງຜູ້ສະສາງ-ຊຳລະ ໄດ້ຮັບເອກະສານຕາມ ຂໍ້ 1 ຫາ 3 ວັກໜຶ່ງ ຂອງມາດຕານີ້ ຕ້ອງປະຕິບັດ ດັ່ງນີ້:

1. ລວບລວມ ແລະ ກວດສອບຊັບສິນຂອງກອງທຶນຮ່ວມ ຫຼື ຊັບສິນທີ່ກອງທຶນຮ່ວມດັ່ງກ່າວທີ່ມີສິດຈະໄດ້ຮັບຈາກບຸກຄົນ ຫຼື ນິຕິບຸກຄົນອື່ນ ໃຫ້ສຳເລັດພາຍໃນກຳນົດເວລາ ສິບວັນ;
2. ຈຳໜ່າຍຊັບສິນຂອງກອງທຶນຮ່ວມດັ່ງກ່າວ ເພື່ອລວບລວມເປັນເງິນສົດ ໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສຳເລັດ ການລວບລວມ ແລະ ກວດສອບຊັບສິນຂອງກອງທຶນຮ່ວມ ກໍລະນີບໍ່ສາມາດຈຳໜ່າຍຊັບສິນໄດ້ຕາມກຳນົດເວລາດັ່ງກ່າວ ສາມາດສືບຕໍ່ໄດ້ຕາມການເຫັນດີຂອງ ສຄຄຊ;
3. ຊຳລະໜີ້, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆ ຂອງກອງທຶນຮ່ວມໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສຳເລັດການຈຳໜ່າຍຊັບສິນຂອງກອງທຶນຮ່ວມ;
4. ແບ່ງເງິນ ຫຼື ຊັບສິນທີ່ເຫຼືອ ໃຫ້ແກ່ຜູ້ຖືໜ່ວຍລົງທຶນ ທີ່ມີລາຍຊື່ໃນປຶ້ມທະບຽນຜູ້ຖືໜ່ວຍລົງທຶນ ໃຫ້ສຳເລັດພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນສຳເລັດການຊຳລະໜີ້, ຄ່າທຳນຽມ ແລະ ຄ່າໃຊ້ຈ່າຍອື່ນໆ ຂອງກອງທຶນຮ່ວມ;
5. ສະເໜີຂໍຂຶ້ນທະບຽນຍຸບເລີກກອງທຶນຮ່ວມ ຕໍ່ ສຄຄຊ;
6. ປະກາດການຍຸບເລີກກອງທຶນດັ່ງກ່າວໃຫ້ມວນຊົນຮັບຊາບພາຍໃນກຳນົດເວລາ ຫ້າວັນນັບແຕ່ວັນ ສຄຄຊ ເຫັນດີໃຫ້ຍຸບເລີກເປັນຕົ້ນໄປ.

ກໍລະນີ ບໍ່ສາມາດສະສາງ-ຊຳລະ ເງິນ ຫຼື ຊັບສິນ ທີ່ເຫຼືອຢູ່ໃຫ້ແກ່ຜູ້ຖືໜ່ວຍລົງທຶນທີ່ມີລາຍຊື່ໃນປຶ້ມທະບຽນຜູ້ຖືໜ່ວຍລົງທຶນ ໄດ້ຕາມກຳນົດເວລາ ທີ່ກຳນົດໄວ້ໃນ ຂໍ້ 4 ວັກສອງ ຂອງມາດຕານີ້ ໃຫ້ມອບເງິນ ຫຼື ຊັບສິນດັ່ງກ່າວໃຫ້ ສຄຄຊ ເປັນຜູ້ຄຸ້ມຄອງ.

## ໝວດທີ 9
## ຄ່າບໍລິການ ແລະ ຂໍ້ຫ້າມ

**ມາດຕາ 45 ຄ່າບໍລິການ**

ຜູ້ທີ່ມີຈຸດປະສົງສ້າງຕັ້ງກອງທຶນຮ່ວມ ຕ້ອງເສຍຄ່າບໍລິການໃຫ້ ສຄຄຊ ຢ່າງຄົບຖ້ວນ. ລາຍລະອຽດຂອງຄ່າບໍລິການມີ ດັ່ງນີ້:

1. ຄ່າໃບອະນຸຍາດສ້າງຕັ້ງກອງທຶນຮ່ວມທີ່ມີອາຍຸຕໍ່າກວ່າ ໜຶ່ງປີ ຈຳນວນ 0,001% ຂອງມູນຄ່າການຈຳໜ່າຍໜ່ວຍລົງທຶນຂອງກອງທຶນຮ່ວມ ຫຼື ຕໍ່າສຸດບໍ່ໃຫ້ຫຼຸດ 1.000.000 ກີບ ແລະ ສູງສຸດ ບໍ່ເກີນ 5.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບອະນຸຍາດ. ສຳລັບຈຳໜ່າຍໜ່ວຍລົງທຶນເພີ່ມ ແມ່ນປະຕິບັດໃນອັດຕາດຽວກັນ;
2. ຄ່າໃບອະນຸຍາດສ້າງຕັ້ງກອງທຶນຮ່ວມທີ່ມີອາຍຸແຕ່ ໜຶ່ງປີຂຶ້ນໄປ ຈຳນວນ 0,002% ຂອງມູນຄ່າການຈຳໜ່າຍໜ່ວຍລົງທຶນຂອງກອງທຶນຮ່ວມ ຫຼື ຕໍ່າສຸດບໍ່ຫຼຸດ 2.000.000 ກີບ ແລະ ສູງສຸດ ບໍ່ເກີນ 10.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບອະນຸຍາດ.

**ມາດຕາ 46 ຂໍ້ຫ້າມ**

ຫ້າມ ບຸກຄົນ ແລະ ນິຕິບຸກຄົນ ທີ່ກ່ຽວຂ້ອງກັບກອງທຶນຮ່ວມ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຈຳໜ່າຍ ຫຼື ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ສຳລັບຜູ້ລົງທຶນລາຍໃຫຍ່ໃຫ້ແກ່ຜູ້ລົງທຶນທົ່ວໄປ;
2. ຈຳໜ່າຍໜ່ວຍລົງທຶນ ຢູ່ ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຄຄຊ;
3. ນຳໃຊ້ ເງິນຈອງຊື້ໜ່ວຍລົງທຶນ ຫຼື ເງິນທີ່ລະດົມໄດ້ ກ່ອນໄດ້ຮັບການຢັ້ງຢືນຜົນສຳເລັດຂອງການຈຳໜ່າຍໜ່ວຍລົງທຶນຈາກ ສຄຄຊ;
4. ເຄື່ອນໄຫວບໍ່ເປັນໄປຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ ຫຼື ສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ແລະ ຜູ້ຖືໜ່ວຍລົງທຶນ;
5. ດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນຂອງກອງທຶນຮ່ວມ ບໍ່ຖືກຕ້ອງຕາມທີ່ໄດ້ກຳນົດໃນສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ກໍລະນີບໍ່ມີມະຕິຂອງກອງປະຊຸມຜູ້ຖືໜ່ວຍລົງທຶນ ຫຼື ບໍ່ມີການກຳນົດໄວ້ໃນສັນຍາລະຫວ່າງ ບໍລິສັດບໍລິຫານຊັບສິນ ແລະ ຜູ້ຖືໜ່ວຍລົງທຶນ;
6. ນຳໃຊ້ທະນາຄານດູແລຊັບສິນ ທີ່ເປັນບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດກັບ ບໍລິສັດບໍລິຫານຊັບສິນ;
7. ຈົດກ່າຍບັນຊີ ຫຼື ກວດສອບເອກະສານລາຍງານການເງິນ ຂອງກອງທຶນຮ່ວມ ບໍ່ຖືກຕ້ອງຕາມຄວາມເປັນຈິງ;
8. ຊື້-ຂາຍ ໜ່ວຍລົງທຶນ ທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບ ຢູ່ນອກຕະຫຼາດຫຼັກຊັບ;
9. ຂຶ້ນທະບຽນ, ຮັບຝາກ ແລະ ສະສາງ-ຊຳລະ ການຊື້-ຂາຍ ໜ່ວຍລົງທຶນ ຫຼື ການສະສາງ-ຊຳລະ ກອງທຶນຮ່ວມ ທີ່ຍຸບເລີກບໍ່ຖືກຕ້ອງ;
10. ສ້າງ, ສະໜອງ ຫຼື ປອມແປງ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບກອງທຶນຮ່ວມ ບໍ່ຖືກຕ້ອງຕາມຄວາມເປັນຈິງ;
11. ຄວບລວມ ຫຼື ຍຸບເລີກ ກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຄຄຊ;
12. ຖືຄອງໜ່ວຍລົງທຶນຂອງກອງທຶນຮ່ວມທີ່ຕົນເອງສ້າງຕັ້ງ ຫຼື ດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 47 ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ບໍລິຫານກອງທຶນຮ່ວມ, ບໍລິສັດບໍລິຫານຊັບສິນ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ຂອງບໍລິສັດບໍລິຫານຊັບສິນ ລວມທັງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

### ມາດຕາ 48 ມາດຕະການຕໍ່ຜູ້ລະເມີດ

ຜູ້ບໍລິຫານກອງທຶນຮ່ວມ, ບໍລິສັດບໍລິຫານຊັບສິນ, ສະມາຊິກສະພາບໍລິຫານ, ຄະນະອຳນວຍການ ຂອງບໍລິສັດບໍລິຫານຊັບສິນ ລວມທັງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍແກ່ ກອງທຶນຮ່ວມ, ຜູ້ຖືໜ່ວຍລົງທຶນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການ ກ່າວເຕືອນ, ໂຈະ, ຍົກເລີກໃບຮັບຮອງ ຫຼື ໃບອະນຸຍາດຕ່າງໆ ທີ່ ສຄຄຊ ອອກໃຫ້, ຍຸບເລີກກອງທຶນຮ່ວມ, ປັບໃໝ, ໃຊ້ແທນຄ່າເສຍຫາຍ ທາງແພ່ງ ຫຼື ຮັບຜິດຊອບທາງອາຍາ ຕາມກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ.

ນອກຈາກມາດຕະການທີ່ກ່າວມາຂ້າງເທິງ ຍັງຈະຖືກປະຕິບັດມາດຕະການປັບໃໝເພີ່ມເຕີມ ດັ່ງນີ້:

1. ຈຳໜ່າຍ ຫຼື ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມ ສຳລັບຜູ້ລົງທຶນລາຍໃຫຍ່ໃຫ້ແກ່ຜູ້ລົງທຶນທົ່ວໄປ ຈະຖືກປັບໃໝ ສອງເທົ່າຂອງມູນຄ່າທີ່ຈຳໜ່າຍ ຫຼື ຂາຍໜ່ວຍລົງທຶນຂອງກອງທຶນຮ່ວມດັ່ງກ່າວ;
2. ຈຳໜ່າຍໜ່ວຍລົງທຶນ ຢູ່ ພາຍໃນ ແລະ ຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຄຄຊ ຈະຖືກປັບໃໝ ສອງສ່ວນຮ້ອຍ ຂອງມູນຄ່າຈຳໜ່າຍໜ່ວຍລົງທຶນຂອງກອງທຶນຮ່ວມດັ່ງກ່າວ;
3. ນຳໃຊ້ເງິນຈອງຊື້ໜ່ວຍລົງທຶນ ຫຼື ນຳໃຊ້ເງິນທີ່ລະດົມໄດ້ ກ່ອນໄດ້ຮັບການຢັ້ງຢືນຜົນສຳເລັດຂອງການຈຳໜ່າຍໜ່ວຍລົງທຶນຈາກ ສຄຄຊ ຈະຖືກປັບໃໝ 15.000.000 ຫາ 25.000.000 ກີບ;
4. ເຄື່ອນໄຫວບໍ່ເປັນໄປຕາມທີ່ກຳນົດໄວ້ໃນໜັງສືຊວນຊື້ ຫຼື ສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ແລະ ຜູ້ຖືໜ່ວຍລົງທຶນ ເວັ້ນເສຍແຕ່ມີມະຕິຮັບຮອງຈາກກອງປະຊຸມຜູ້ຖືໜ່ວຍລົງທຶນ ຈະຖືກປັບໃໝ 15.000.000 ຫາ 25.000.000 ກີບ;
5. ດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນຂອງກອງທຶນຮ່ວມ ບໍ່ຖືກຕ້ອງຕາມທີ່ກຳນົດໃນສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ແລະ ທະນາຄານດູແລຊັບສິນ ກໍລະນີບໍ່ມີມະຕິຂອງກອງປະຊຸມຜູ້ຖືໜ່ວຍລົງທຶນ ຫຼື ບໍ່ມີການກຳນົດໄວ້ໃນສັນຍາລະຫວ່າງບໍລິສັດບໍລິຫານຊັບສິນ ແລະ ຜູ້ລົງທຶນ ຈະຖືກປັບໃໝ 15.000.000 ຫາ 25.000.000 ກີບ;
6. ນຳໃຊ້ທະນາຄານດູແລຊັບສິນ ທີ່ເປັນບໍລິສັດໃນກຸ່ມ ຫຼື ກຸ່ມບໍລິສັດ ກັບບໍລິສັດບໍລິຫານຊັບສິນ ຈະຖືກປັບໃໝ 15.000.000 ຫາ 25.000.000 ກີບ;
7. ຈົດກ່າຍບັນຊີ ຫຼື ກວດສອບເອກະສານລາຍງານການເງິນຂອງກອງທຶນຮ່ວມ ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ;

8. ຊື້-ຂາຍ ໜ່ວຍລົງທຶນ ທີ່ຈົດທະບຽນຢູ່ຕະຫຼາດຫຼັກຊັບ ຢູ່ນອກຕະຫຼາດຫຼັກຊັບ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຊື້-ຂາຍ;
9. ຂຶ້ນທະບຽນ, ຮັບຝາກ ແລະ ສະສາງ-ຊໍາລະ ການຊື້-ຂາຍ ໜ່ວຍລົງທຶນ ຫຼື ການສະສາງ-ຊໍາລະກອງທຶນທີ່ຍຸບເລີກ ບໍ່ຖືກຕ້ອງ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຊື້-ຂາຍ;
10. ສ້າງ, ສະໜອງ ຫຼື ປອມແປງ ຂໍ້ມູນ ແລະ ເອກະສານ ທີ່ກ່ຽວຂ້ອງກັບກອງທຶນຮ່ວມ ທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ;
11. ຄວບລວມ ຫຼື ຍຸບເລີກ ກອງທຶນຮ່ວມ ໂດຍບໍ່ໄດ້ຮັບອະນຸຍາດຈາກ ສຄຄຊ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍ;
12. ຖືຄອງໜ່ວຍລົງທຶນຂອງກອງທຶນຮ່ວມທີ່ຕົນເອງສ້າງຕັ້ງ ຫຼື ດູແລຜົນປະໂຫຍດ ແລະ ເກັບຮັກສາຊັບສິນ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າໜ່ວຍລົງທຶນທີ່ຕົນເອງຖືຄອງ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 49 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຜູ້ບໍລິຫານກອງທຶນຮ່ວມ, ບໍລິສັດບໍລິຫານຊັບສິນ, ສະມາຊິກສະພາບໍລິຫານ, ຄະນະອໍານວຍການ ຂອງບໍລິສັດບໍລິຫານຊັບສິນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກັບການເຄື່ອນໄຫວທຸລະກິດກ່ຽວກັບການສ້າງຕັ້ງ ແລະ ບໍລິຫານກອງທຶນຮ່ວມ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມຂອບເຂດ ສິດ ແລະ ໜ້າທີ່ ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 50 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ**

ຄະນະກໍາມະການຄຸ້ມຄອງຫຼັກຊັບ ປະທານ

ສົມດີ ດວງດີ